ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 06 ຫາ 10 ກຸມພາ 2023



ເງື່ອນໄຂສຸຂານາໄມພືດສຳລັບການສົ່ງອອກໝາກກ້ວຍໄປ ສປ ຈີນ (ຕໍ່)

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ເງື່ອນໄຂສຸຂານາໄມພືດສຳລັບ ການສົ່ງອອກໝາກກ້ວຍ ໄປ ສປ ຈີນ(ຕໍ່)

ຕໍ່ຈາກວາລະສານ ກະສິກຳ ແລະ ປ່າໄມ້ ສະບັບວັນທີ 30 ມັງກອນ ຫາ 03 ກຸມພາ 2023 ທີ່ຜ່ານມາ ເງື່ອນໄຂສຸຂານາໄມພືດ ສຳລັບການສົ່ງອອກໝາກກ້ວຍ ໄປ ສປ ຈີນ ຍັງໄດ້ກຳນົດກ່ຽວກັບການຂຶ້ທະບຽນ, ມາດຕະການ ສຸຂານາໄມພືດກ່ອນການສົ່ງອອກ, ມາດຕະການກັກກັນພືດຢູ່ດ່ານຂາເຂົ້າ ເພີ່ມຕື່ມດັ່ງນີ້:

## ການຂຶ້ນທະບຽນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຂໍຂຶ້ນທະບຽນ ຫຼື ຂໍຕໍ່ໃບທະບຽນ ສວນປູກ, ໂຮງເຮືອນຫຸ້ມຫໍ່ບັນຈຸ ແລະ ໂຮງເຮືອນອົບອາຍເຢັນ ແມ່ນປະຕິບັດຕາມລະບຽບການຂອງ ກະຊວງກະສິກຳ ແລະ ປ່າໄມ້ ທີ່ປະກາດໃຊ້ແຕ່ລະໄລຍະ ໂດຍຍື່ນຄຳຮ້ອງເຖິງກົມປູກຝັງ ໃນເດືອນ ມັງກອນ ແລະ ມິຖຸນາ ຂອງທຸກປີ

### ຄຳຮ້ອງຂໍຂຶ້ນທະບຽນປະກອບມີ:

1) ໃບຄຳຮ້ອງ ຕາມແບບພິມທີ່ກົມປູກຝັງກຳນົດ;
2) ສຳເນົາ ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ປ່າໄມ້;
3) ສຳເນົາ ໃບຢັ້ງຢືນການມອບພັນທະອາກອນປະຈຳປີ ສຸດທ້າຍ;
4) ຄູ່ມືດຳເນີນງານກ່ຽວກັບ ການຈັດການດ້ານສຸຂານາໄມ ແລະ ສຸຂານາໄມພືດ;
5) ໃບມອບສິດ ແລະ ສຳເນົາບັດປະຈຳຕົວຂອງຜູ້ຍື່ນເອກະສານໃນກໍລະນີ ໃຫ້ຜູ້ອື່ນຍື່ນຄຳຮ້ອງແທນ.
6) ອາຍຸຂອງໃບທະບຽນນຳໃຊ້ໄດ້ໜຶ່ງປີ ແລະ ສາມາດຂໍຕໍ່ໄດ້. ຜູ້ທີ່ໄດ້ຮັບຂຶ້ນທະບຽນ ແລະ ຮັບຮອງໃຫ້ເປັນຜູ້ສົ່ງອອກ ຈະຖືກເຜີຍແຜ່ໃນເວັບໄຊຂອງອົງການບໍລິຫານ ພາສີ ແຫ່ງ ສປ ຈີນ ຊຶ່ງມີຂໍ້ມູນຊື່, ທີ່ຢູ່ ແລະ ເລກລະຫັດ.



## ມາດຕະການ ສຸຂານາໄມພືດກ່ອນສົ່ງອອກ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຮອງໃຫ້ເປັນຜູ້ສົ່ງອອກ ຈາກອົງການບໍລິຫານພາສີ ແຫ່ງ ສປ ຈີນ ຕ້ອງປະຕິບັດ ດັ່ງນີ້:

1.ຕ້ອງຍື່ນຄຳຮ້ອງຕາມແບບພິມທີ່ກົມປູກຝັງກຳນົດ ພ້ອມທັງຄັດຕິດເອກະສານທີ່ກ່ຽວຂ້ອງ ເຖິງກົມ ປູກຝັງ ຫຼື ຂະແໜງປູກຝັງຂັ້ນແຂວງ. ສຳລັບເງື່ອນໄຂ, ຂັ້ນຕອນ ແລະ ວິທີການ ສະເໜີ ຂໍໃບຢັ້ງຢືນສຸຂານາໄມພືດ ແມ່ນໃຫ້ປະຕິບັດ ຕາມບົດແນະນຳ ຂອງກົມປູກຝັງ ເລກທີ 2880/ກປຝ, ລົງວັນທີ 11 ທັນວາ 2019;

2.ໃນປີທຳອິດຂອງການສົ່ງອອກ ກົມປູກຝັງຈະປະສານງານໄປຍັງ ເຈົ້າໜ້າທີ່ກັກກັນພືດ ຂອງສປ ຈີນ ມາຕິດຕາມພື້ນທີ່ການຜະລິດ ຢູ່ ສປປ ລາວເພື່ອດຳເນີນການກວດກາສະຖານທີ່ການຜະລິດແລະ ກວດກາລະບົບການຈັດການ ໝາກກ້ວຍ ຕາມເງື່ອນໄຂດ້ານສຸຂານາໄມພືດ ຂອງ ຄຳແນະນຳສະບັບນີ້, ຜູ້ສົ່ງອອກຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ຕາມລະບຽບການ;

3. ກໍລະນີ ກວດກາພົບສັດຕູພືດທີ່ໄດ້ກຳນົດໄວ້ໃນຂໍ້ II, 2 ຂອງຄຳແນະນຳສະບັບນີ້ ແມ່ນຫ້າມສົ່ງອອກຊຸດສິນຄ້າດັ່ງກ່າວ ແລ້ວລາຍງານໃຫ້ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ຊາບທັນທີເພື່ອໂຈະ ສະຖານທີປະກອບການຜະລິດຊົ່ວຄາວພ້ອມຊອກຫາວິທີແກ້ໄຂ;

4. ໃນກໍລະນີ ເຈົ້າໜ້າທີ່ກັກກັນພືດທີ່ຮັບຜິດຊອບກວດກາບໍ່ພົບເຫັນການຕິດແປດສັດຕູພືດຕາມຂໍ້ II, 2 (ຊຶ່ງໄດ້ເຜີຍແຜ່ໃນວາລະສານ ສະບັບວັນທີ 30 ມັງກອນ ຫາ 03 ກຸມພາ 2023) ຂອງຄຳແນະນຳສະບັບນີ້ ຕ້ອງອອກໃບຢັ້ງຢືນສຸຂານາໄມພືດ ສຳລັບ ຊຸດສິນຄ້າ ແລະ ຕ້ອງພິມໃສ່ຂໍ້ມູນເພີ່ມຕື່ມ (Additional Declare) ຂອງໃບຢັ້ງຢືນສຸຂານາໄມພືດວ່າ: “This consignment of banana complies with the Protocol on the phytosanitary requirements for export of banana from Laos to China and is free od



soil and the quarantine pests concerned by China.

5. ເຈົ້າໜ້າທີ່ກັກກັນພືດທີ່ຮັບຜິດຊອບອອກໃບຢັ້ງຢືນ ສຸຂານາໄມພືດ ຕ້ອງລະບຸຂໍ້ຄວາມດ່ານນຳເຂົ້າ ທີ່ກຳນົດ ໂດຍ ອົງການພາສີ ແຫ່ງ ສປ ຈີນ ໃນແຕ່ລະໄລຍະ ແລະ ຂໍ້ມູນກ່ຽວກັບ ເງື່ອນໄຂການອົບອາຍເຢັນ.

## ມາດຕະການກັກກັນພືດຢູ່ດ່ານຂາເຂົ້າ

ເມື່ອຊຸດສິນຄ້າໝາກກ້ວຍ ຈາກ ສປປ ລາວ ມາເຖິງດ່ານຂາເຂົ້າ ຂອງ ສປ ຈີນ, ເຈົ້າຂອງສິນຄ້າ ຕ້ອງແຈ້ງເອກະສານ ຕໍ່ເຈົ້າໜ້າທີ່ກັກກັນພືດ ຂອງ ສປ ຈີນ ເພື່ອດຳເນີນການກວດກາເອກະສານທີ່ກ່ຽວຂ້ອງ.

ການຂົນສົ່ງຊຸດສິນຄ້າມາກຈາກ ສະຖານທີ່ກັກກັນພືດຂອງ ສປ ຈີນ ເພື່ອດຳເນີນການ ກວດກາເອກະສານທີ່ກ່ຽວຂ້ອງ.

ການຂົນສົ່ງຊຸດສິນຄ້າທີ່ມາຈາກ ສະຖານທີ່ປະກອບການຜະລິດ ທີ່ບໍ່ໄດ້ຂຶ້ນທະບຽນແມ່ນ ຫ້າມນຳເຂົ້າຢ່າງເດັດຂາດ.

ຖ້າຊຸດສິນຄ້າປົນເປື້ອນຈາກິ່ງງ່າ, ໃບ, ດິນ ແລະ ໝາກສຸກ ແມ່ນບໍ່ອະນຸຍາດໃຫ້ນຳເຂົ້າ ຖ້າກວດກາພົບສັດຕູພືດທີ່ໄດ້ກຳນົດໄວ້ໃນຂໍ້ II, 2 ຄຳແນະນຳສະບັບນີ້ ຊຸດສິນຄ້າຈະຖືກສົ່ງກັບ ທຳລາຍ ຫຼື ນຳໃຊ້ມາດຕະການທາງດ້ານກັກກັນ ແລະ ກຳຈັດສັດຕູພືດ ທີ່ມີປະສິດທິພາບ. ເຈົ້າໜ້າທີ່ຝ່າຍຈີນຈະແຈ້ງໃຫ້ເຈົ້າໜ້າທີ່ຝ່າຍລາວຮັບຊາບທັນທີ່ກ່ຽວກັບຊະນິດສັດຕູພືດ, ເລກທີໃບຢັ້ງຢືນ ສຸຂານາໄມພືດ ແລະ ຂໍ້ມູນຕ່າງໆທີ່ກ່ຽວຂ້ອງ ພ້ອມທັງໂຈະການນຳເຂົ້າ ໝາກກ້ວຍ ຈາກສວນປູກ ແລະ/ຫຼື ໂຮງເຮືອນຫຸ້ມຫໍ່ບັນຈຸ ຜູ້ປະກອບການຕ້ອງຊອກຫາສາເຫດ ແລະ ນຳໃຊ້ມາດຕະການທີ່ເໝາະສົມເພື່ອປ້ອງກັນບໍ່ໃຫ້ເກີດຂຶ້ນອີກ.

ຖ້າກວດພົບການນຳໃຊ້ສານເຄມີ ຫຼື ສານເຄມີຕົກຄ້າງຢາປາບສັດຕູພືດເກີນຄ່າມາດຕະຖານທີ່ກຳນົດ ຊຸດສິນຄ້າດັ່ງກ່າວຈະຖືກສົ່ງກັບ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ນ. ສຸດາຄຳ ພົມມະສອນ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳພອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;